ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 07 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 28 JUN 2016

ສຳນັກງານ ຄຄຊ
ລາຍຮັບ
ເລກທີ 0628
ວັນທີ 01 JUL 2016
ໂທລະສັບ 021.217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 05/2016 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

1. ສຳເລັດການອອກໃບອະນຸຍາດສ້າງຕັ້ງຖາວອນໃຫ້ແກ່ທະນາຄານ ເອຊີລີດາ ລາວ ຈຳກັດ ສາຂາຫຼວງພະບາງ, ທະນາຄານ ພາບລິກ ສາຂາວັດໄຕ; ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວໃຫ້ແກ່ ສກຈບ ໄຊທານີ; ສຳເລັດການມອບຮັບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ ສກຈບ ສະສົມຊັບ ພາຍຫຼັງທີ່ໄດ້ເພີ່ມທຶນຈົດທະບຽນ; ສຳເລັດ ການອອກຂໍ້ຕົກລົງຍຸບເລີກ ແລະ ແຈ້ງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການສະເໜີຂໍຢຸດເຊົາການດຳເນີນທຸລະກິດຂອງ ສກຈບ ເອສເຄພີ,ໂຮງຊວດຈຳ ພາລີຊັບ ແລະ ໂຮງຊວດຈຳ ພອນສຸວັນ;

2. ສຳເລັດການລົງກວດກາບັນດາທະນາຄານທຸລະກິດ ຈຳນວນ 14 ແຫ່ງ, ເກັບຄ່າຄຸ້ມຄອງປະຈຳປີ 39 ແຫ່ງ, ລົງກວດກາປະຈຳປີ 2 ແຫ່ງ;

3. ສຳເລັດຮ່າງຂໍ້ຕົກລົງວ່າດ້ວຍການບໍລິຫານຊັບສິນ ແລະ ຂໍ້ຕົກລົງວ່າດ້ວຍການບໍລິການຜະລິດຕະພັນຂອງທະນາຄານທຸລະກິດ ແລະ ໃຫ້ຊ່ຽວຊານທະນາຄານໂລກ ປະກອບຄຳເຫັນ;

4. ສຳເລັດການເຂົ້າຮ່ວມກອງປະຊຸມລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານອາຊຽນ+3 ໃນລະຫວ່າງວັນທີ 02-04 ພຶດສະພາ 2016 ແລະ ການເປັນປະທານກອງປະຊຸມກັບປະທານທະນາຄານ ECB ໃນກອງປະຊຸມຮ່ວມຜູ້ວ່າການທະນາຄານກາງອາຊຽນ +3 ແລະ ທະນາຄານກາງກຸ່ມທີ່ໃຊ້ເງິນເອີໂຣ ທີ່ເມືອງ ແຟງເຟີດ, ປະເທດເຢຍລະມັນ.

5. ສຳເລັດການຈັດກອງປະຊຸມຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ໃນຕົ້ນເດືອນເມສາ 2016 ທີ່ສະຖາບັນການທະນາຄານ ພາຍໃຕ້ການເປັນປະທານຂອງທ່ານ ຜູ້ວ່າການ ທຫລ;

6. ສຳເລັດການປັບປຸງລະບົບຮັບສົ່ງຂໍ້ມູນລາຍງານ (MIS) ເພື່ອໃຫ້ສາມາດຮັບເອົາຂໍ້ມູນລາຍງານປະຈຳວັນເບື້ອງຕົ້ນ ຈາກທະນາຄານທຸລະກິດເຂົ້າສູ່ລະບົບ ແນໃສ່ເປັນຂໍ້ມູນການເງິນເບື້ອງຕົ້ນໃຫ້ແກ່ຄະນະຜູ້ວ່າການ ໄດ້ທັນສະພາບການ;

7. ວຽກງານ Core banking ຂອງ ທຫລ, ສຳເລັດການຄິດໄລ່ຂໍ້ມູນລາຍງານປະຈຳເດືອນ 04 ໃຫ້ ທຫລ ສາຂາຫຼວງພະບາງ, ສະຫວັນນະເຂດ, ສາຂາຈຳປາສັກ ແລະ ສະຖາບັນການທະນາຄານ, ແກ້ໄຂບັນຫາໂມດູນອັດຕາແລກປ່ຽນ ຈຳນວນ 2 ຄັ້ງ ແລະ ໂມດູນເງິນສົດ ຈຳນວນ 2 ຄັ້ງ;

8. ສຳເລັດການແນະນຳການບັນທຶກບັນຊີ ສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ (Forward Rate Agreement) ; ບົດແນະນຳການບັນທຶກບັນຊີກ່ຽວກັບການຊື້-ຂາຍ ແລະ ຕີມູນຄ່າເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດ; ບົດແນະນຳການບັນທຶກບັນຊີສຳລັບທະນາຄານທຸລະກິດກ່ຽວກັບເງິນກູ້ປ່ອຍຮ່ວມ (Syndicated Loan) ແລະ ບົດແນະນຳການບັນທຶກບັນຊີກ່ຽວກັບຫຼຽນ ແລະ ທະນະບັດທີ່ລະນຶກສຳລັບ ທະນາຄານແຫ່ງ ສປປ ລາວ;

9. ສຳເລັດການເຂົ້າຮ່ວມກອງປະຊຸມຊ່ອງໜ້າ (Face to face meeting) ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ (Action plan) ກ່ຽວກັບວຽກງານ AML/CFT ຢູ່ທີ່ປະເທດມຽນມາ ໃນລະຫວ່າງວັນທີ 03-05 ພຶດສະພາ 2016;

10. ໃນເດືອນ 5/2016 ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈຳນວນ 29 ສະບັບ. ປັດຈຸບັນ STR ລວມທັງໝົດ ມີ 345 ສະບັບ;

11. ອອກແຈ້ງການເພີ່ມທະວີເອົາໃຈໃສ່ຈັດຕັ້ງປະຕິບັດຍັດຕິ 2270(2016) ຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດຕໍ່ກັບການຂວ້ຳບາດ ປະເທດ ສປປ ເກົາຫຼີ ໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຈຸລະພາກທົ່ວປະເທດ.

## III. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

ໃນເດືອນ 05/2016 ສະພາບເສດຖະກິດໂລກໂດຍລວມແມ່ນຂະຫຍາຍຕົວຊ້າ ຄື: (1)ໃນໄຕມາດ 1/2016 ຕົວເລກຈີດີພີ ຂອງ ສ. ອາເມລິກາ ຂະຫຍາຍຕົວ 0,5% ຈາກ 1,4% ໃນໄຕມາດ 4/2015 ຊຶ່ງເປັນຕົວເລກຕ່ຳສຸດນັບຕັ້ງແຕ່ໄຕມາດ 1/2014 ແລະ ເສດຖະກິດຂອງ ສປ ຈີນ ໃນໄຕມາດ 1/2016 ຂະຫຍາຍຕົວຫຼຸດລົງມາຢູ່ໃນລະດັບ 6,7% ຊຶ່ງໄດ້ສົ່ງຜົນກະທົບຕໍ່ກັບພາກອຸດສາຫະກຳການຜະລິດ ແລະ ພາກການສົ່ງອອກຂອງຫຼາຍປະເທດທົ່ວໂລກ ເຮັດໃຫ້ເສດຖະກິດໂລກຂະຫຍາຍຕົວຊ້າ; (2)ສະກຸນເງິນໃນບັນດາປະເທດພາກພື້ນອາຊີໂດຍລວມແມ່ນແຂງຄ່າທຽບໃສ່ໂດລາສະຫະລັດ ໂດຍສະເພາະສະກຸນເງິນເຢນ, ເງິນວອນ, ເງິນບາດ, ເງິນຣູເປຍ ແລະ ເງິນຢວນ ແຂງຄ່າ 2,33%, 0,94%, 0,55%, 0,12% ແລະ 0,01%[1] ຕາມລຳດັບ ຍ້ອນປັດໄຈການໄຫຼເຂົ້າຂອງເງິນທຶນໃນໄລຍະສັ້ນຈາກຕ່າງປະເທດທີ່ເຂົ້າມາລົງທຶນໃນພາກພື້ນອາຊີ ແລະ ໃນຕະຫຼາດເກີດໃໝ່ ພາຍຫຼັງທີ່ທະນາຄານກາງສະຫະລັດ ຍັງບໍ່ທັນຕັດສິນໃຈປັບຂຶ້ນອັດຕາດອກເບ້ຍ ແລະ ທະນາຄານກາງເອີຣົບ ໄດ້ປັບຫຼຸດອັດຕາດອກເບ້ຍພື້ນຖານ ຢູ່ໃນລະດັບ 0%.

ເງິນໂດລາສະຫະລັດອ່ອນຄ່າ 1,08% ທຽບເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີພາຍຫຼັງເສດຖະກິດຂອງ ສ.ອາເມລິກາ ຂະຫຍາຍຕົວໃນຈັງຫວະທີ່ຊ້າລົງ ຊຶ່ງຂະຫຍາຍຕົວ 0,5% ໃນໄຕມາດ 1/2016 ຈາກ 1,4% ໃນໄຕມາດ

[1] ຕົວເລກສະເລ່ຍຂອງວັນທີ11/3-11/4/2016ແລະວັນທີ12/4/2016-11/5/2016ຂໍ້ມູນຈາກwww.federalreserve.gov

ຜ່ານມາ. ສ່ວນເງິນຢວນອ່ອນຄ່າທຽບໂດລາສະຫະລັດ ຍ້ອນຕົວເລກການລົງທຶນໂດຍກົງຈາກຕ່າງປະເທດຂອງ ສປ ຈີນ ເພີ່ມຂຶ້ນພຽງແຕ່ 6% ໃນເດືອນ 4/2016 ຈາກ ເພີ່ມຂຶ້ນ 7,8% ທຽບໄລຍະດຽວກັນຂອງປີຜ່ານມາ.

ລາຄານ້ຳມັນເພີ່ມຂຶ້ນ 12,43% ເປັນ 45,53 ໂດລາສະຫະລັດ/ບາເຣວ. ສຳລັບລາຄາຄຳ ເພີ່ມຂຶ້ນ 2,18% ເປັນ 1.261,74 ໂດລາສະຫະລັດ/ອອນ.

## 2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ສືບຕໍ່ປະຕິບັດນະໂຍບາຍເງິນຕາໃຫ້ມີຄວາມຄ່ອງຕົວ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາ, ຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດດັ່ງລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 05/2016 ຄາດວ່າຈະຫຼຸດລົງຢູ່ໃນລະດັບ 0,6% ຫຼຸດລົງ 0,36% ຈາກ 0,96% ໃນເດືອນ 04/2016;
- ຖານເງິນຕາປະຈຳເດືອນ 05/2016 ຫຼຸດລົງ 2.674,35 ຕື້ກີບ ຫຼື 8,35% ທຽບໃສ່ເດືອນ 04/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 850,28 ຕື້ກີບ ຫຼື 2,98%. ສາເຫດຕົ້ນຕໍຍ້ອນ ທທກ ໂອນເງິນໄປຕ່າງປະເທດ ສຸດທິ 304,67 ລ້ານໂດລາສະຫະລັດ, ເຖິງແມ່ນວ່າ ທທກ ມອບເງິນສົດ ສຸດທິ 21,16 ລ້ານໂດລາສະຫະລັດກໍຕາມ. ປະລິມານເງິນ M2 ເພີ່ມຂຶ້ນ 267,97 ຕື້ກີບ ຫຼື 0,42% ທຽບໃສ່ເດືອນ 04/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7.192,13 ຕື້ກີບ ຫຼື 12,71% ສາເຫດຍ້ອນ ທທກ ປ່ອຍສິນເຊື່ອໃຫ້ລູກຄ້າ ແລະ ລັດຖະບານໃຊ້ຈ່າຍງົບປະມານ;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 5/2016[2] ທຽບເດືອນ 4/2016[3] ເໜັງຕີງໃນຂອບທີ່ກຳນົດໄວ້ເຫັນໄດ້ຈາກເງິນກີບແຂງຄ່າ 0,12% ທຽບເງິນໂດລາສະຫະລັດ ແລະ ແຂງຄ່າ 0,08% ທຽບເງິນບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດຫຍັບເຂົ້າຫາກັນທັງສອງສະກຸນເງິນ ຄື: ຈາກ 0,35% ເປັນ 0,28% ສຳລັບກີບທຽບໂດລາສະຫະລັດ ແລະ ຈາກ 0,04% ເປັນ 0,02% ສຳລັບກີບທຽບບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,64% ທຽບກັບເງິນໂດລາສະຫະລັດ ແຕ່ອ່ອນຄ່າ 1,68% ທຽບເງິນບາດ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມປະຈຳເດືອນ ແຕ່ວັນທີ (18/04-12/05/2016) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 36,53% ເນື່ອງມາຈາກປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດຫຼຸດລົງ ເຫັນໄດ້ຈາກ ທທກ ຊື້ສຸດທິ 358,08 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຊື້ໂດລາສະຫະລັດສຸດທິ 539,26 ລ້ານໂດລາສະຫະລັດ ຂາຍເງິນບາດສຸດທິ 6.341,12 ລ້ານບາດ ຫຼື 181,18 ລ້ານໂດລາສະຫະລັດທຽບເທົ່າ. ທຫລ ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 87,24 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍສຸດທິ 87,42 ລ້ານໂດລາສະຫະລັດ ແຕ່ຊື້ເງິນບາດສຸດທິ 6,14 ລ້ານບາດ ຫຼື 0,18 ລ້ານໂດລາສະຫະລັດທຽບເທົ່າ;
- ດຸນການຊຳລະກັບຕ່າງປະເທດຜ່ານ ITRS ປະຈຳເດືອນ 05 (18/04-12/05/2016) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 150,23 ລ້ານໂດລາສະຫະລັດ, ໃນນັ້ນ ກະແສເງິນໄຫຼອອກ 766,58 ລ້ານໂດລາສະຫະລັດ ຊຶ່ງມາຈາກການຊຳລະເງິນກູ້ຢືມຂອງທະນາຄານທຸລະກິດຈຳນວນ 521,98 ລ້ານໂດລາສະຫະລັດ. ສ່ວນ

---

[2] ອັດຕາແລກປ່ຽນສະເລ່ຍຂອງວັນທີ12/4-13/5/2016

[3] ອັດຕາແລກປ່ຽນສະເລ່ຍຂອງວັນທີ13/3-11/4/2016

ກະແສເງິນໄຫຼເຂົ້າ 616,35 ລ້ານໂດລາສະຫະລັດ ຊຶ່ງມາຈາກການລົງທຶນໂດຍກົງຈາກຕ່າງປະເທດ 89,94 ລ້ານໂດລາສະຫະລັດ, ເງິນກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ 246,57 ລ້ານໂດລາສະຫະລັດ.

## 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ຍອດເຫຼືອເງິນຝາກທັງໝົດ ຮອດວັນທີ 11/05/2016 (ຕົວເລກເບື້ອງຕົ້ນ) ມີຈຳນວນ 54.085,60 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1,28%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 0,45% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 50,47% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດເພີ່ມຂຶ້ນ2,15% ຊຶ່ງກວມເອົາ 49,53% ຂອງເງິນຝາກທັງໝົດ;

ຍອດເຫຼືອສິນເຊື່ອທັງໝົດ ຮອດວັນທີ 11/05/2016 (ຕົວເລກເບື້ອງຕົ້ນ) ມີຈຳນວນ 50.856,56 ຕື້ກີບ ເພີ່ມຂຶ້ນ 1,51% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 47,53% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 52,47% ຂອງສິນເຊື່ອທັງໝົດ;

ໃນເດືອນ 05/2016 ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 2,33 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 86,62%. ເກັບຕົ້ນທຶນໄດ້ 28,08 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 05/2016 ມີຈຳນວນ 2.557,10 ຕື້ກີບ. ໃນນີ້, ສິນເຊື່ອຢູ່ເມືອງເປົ້າໝາຍ 1.642,68 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 222,24 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 254,53 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 437,64 ຕື້ກີບ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 04/2016 ມີຈຳນວນ 2.282,99 ຕື້ກີບ ເພີ່ມຂຶ້ນ 7,16% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 3,53% ຂອງຍອດເຫຼືອສິນເຊື່ອທັງໝົດ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.854 ສະບັບ ເພີ່ມຂຶ້ນ 15,53% ເປັນເງິນຈຳນວນ 3.047,12 ຕື້ກີບ ເພີ່ມຂຶ້ນ 7,25% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 121 ຄັ້ງ ມີມູນຄ່າການໂອນ 564,89 ຕື້ກີບ ເພີ່ມຂຶ້ນ 20,09% ເມື່ອທຽບໃສ່ເດືອນຜ່ານມາ.

ການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/04/2016-24/05/2016 ມີການເຄື່ອນໄຫວຈຳນວນ 7.955 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 7.900 ຄັ້ງ ມີມູນຄ່າການໂອນ 2.629,21 ຕື້ກີບ ເພີ່ມຂຶ້ນ 32,25% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ຈຳນວນ 2.361 ຄັ້ງ. ໃນນັ້ນມີທະນາຄານທີ່ເຮັດທຸລະກຳທັງໝົດ 37 ທະນາຄານ, ຕະຫຼາດຫຼັກຊັບລາວ ແລະ Bconnex; **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 54 ຄັ້ງ ມີມູນຄ່າການໂອນ 369,13 ຕື້ກີບ ເພີ່ມຂຶ້ນ 18,95% ເມື່ອທຽບໃສ່ເດືອນຜ່ານມາ;
- **ສະກຸນເງິນໂດລາ:** ມີການເຄື່ອນໄຫວ ຈຳນວນ 1 ຄັ້ງ ມີມູນຄ່າ 2 ລ້ານໂດລາສະຫະລັດ.

[1] ເດືອນ 05/2016 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງເກັບກຳຂໍ້ມູນໄດ້ບໍ່ຄົບຖ້ວນ.

### 4.2 ການຊື້-ຂາຍພັນທະບັດ

ໃນເດືອນ 05/2016 ພັນທະບັດກະຊວງການເງິນບ້ວງສະສົມທຶນ ຜ່ານ ທຫລ (ບ້ວງທະນາຄານແຫ່ງ ສປປ ລາວ ບໍ່ຄໍ້າປະກັນ) ມີການຈຳໜ່າຍ ຈຳນວນ 6 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 3 ບ້ວງ ຊຶ່ງມີຍອດເຫຼືອ 5.990,80 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ ຈຳນວນ 554 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ, ບ້ວງລ້າງໜີ້ 3.536,80 ຕື້ກີບ, ບ້ວງລະດົມທຶນຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈຳນວນ 1.900 ຕື້ກີບ).

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 05/2016 ບໍ່ມີການເຄື່ອນໄຫວ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 354 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.142,67 ຈຸດ ເພີ່ມຂຶ້ນ 2,29% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 961.200 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,75 ຕື້ກີບ ຫຼຸດລົງ 0,67% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 66,16% ຂອງມູນຄ່າການຊື້-ຂາຍທັງໝົດ.

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.588 ກີບ/ຮຸ້ນ ເພີ່ມຂຶ້ນ 321 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 329.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,51 ຕື້ກີບ ຫຼຸດລົງ 49,97% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 51,28% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນຢູ່ທີ່ 9,28%[2].

- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.726 ກີບ/ຮຸ້ນ ຫຼຸດລົງ 43 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 508.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,90 ຕື້ກີບ ເພີ່ມຂຶ້ນ 102,66% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 56,68% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 13,83%[3].

- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.600 ກີບ/ຮຸ້ນ ເພີ່ມຂຶ້ນ 700 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 400 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 2,64 ລ້ານກີບ ເພີ່ມຂຶ້ນ 11,86% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 16,67% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.632 ກີບ/ຮຸ້ນ ຫຼຸດລົງ 18 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 113.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 298,78 ລ້ານກີບ ຫຼຸດລົງ 9,15% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ກວມເອົາ 73,36% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[5].

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.368 ກີບ/ຮຸ້ນ ຫຼຸດລົງ 32 ກີບ/ຮຸ້ນ ມີປະລິມານການຊື້-ຂາຍທັງໝົດ 9.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 33,34 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 41,67% ຂອງມູນຄ່າການຊື້-ຂາຍຮຸ້ນ SVN ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 4,22%[6].

## IV. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

ການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ ເຖິງວ່າໄດ້ເຮັດຢ່າງຕໍ່ເນື່ອງ, ແຕ່ກໍ່ເຫັນວ່າບໍ່ທັນທົ່ວເຖິງແຕ່ລະເປົ້າໝາຍ ພະນັກງານຈໍານວນໜຶ່ງຍັງຂາດສະຕິຕໍ່ການຈັດຕັ້ງ. ການຄົ້ນຄວ້າເຊື່ອມຊຶມເອກະສານສໍາຄັນຕ່າງໆ ຂອງພະນັກງານ ຍັງບໍ່ທັນທົ່ວເຖິງເທົ່າທີ່ຄວນ, ການປະຕິບັດວຽກງານວິຊາສະເພາະຂອງທະນາຄານທຸລະກິດ ຍັງບໍ່ໄດ້ຕາມແຜນການ ເປັນຕົ້ນການປ່ອຍສິນເຊື່ອ, ການເກັບກູ້ໜີ້ສິນທັງຕົ້ນທຶນ ແລະ ດອກເບ້ຍ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຕ້ອງໄດ້ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ. ປຸກລະດົມພະນັກງານໃຫ້ມີຄວາມກະຕືລືລົ້ນມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ.

ທະນາຄານທຸລະກິດລັດປັບປຸງແບບແຜນວິທີເຮັດວຽກຂອງຕົນ, ສຶກສາອົບຮົມພະນັກງານໃຫ້ເຂົ້າໃຈຕໍ່ໜ້າທີ່ວຽກງານຂອງຕົນຢ່າງເລິກເຊິ່ງ ເຮັດໃຫ້ພະນັກງານມີຄວາມຊື່ສັດ ແລະ ຮັບຜິດຊອບຕໍ່ໜ້າທີ່ຂອງຕົນໃຫ້ສູງຂຶ້ນ.

# ພາກທີ II
# ທິດທາງແຜນການໃນຕໍ່ໜ້າ

## I. ວຽກງານການເມືອງແນວຄິດ

ສືບຕໍ່ນໍາພາວຽກງານສຶກສາການເມືອງ-ແນວຄິດໃຫ້ພະນັກງານຂອງ ທຫລ ໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນຕາມທີ່ໄດ້ກໍານົດໄວ້ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;

---

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ເຟີ້ ແລະ ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;

- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;

- **ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ:** ສືບຕໍ່ການຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ລາວຈີນ ຈຳກັດ ສາຂາບໍ່ເຕັນ ແຂວງຫຼວງນ້ຳທາ, ທະນາຄານ ອາເຣສບີ ລາວ ຈຳກັດ ສາຂາສີຖານເໜືອ ນະຄອນຫຼວງວຽງຈັນ ແລະ ທະນາຄານ ທວຽດຕິນ ລາວ ຈຳກັດ ກ່ຽວກັບການຂໍຍົກລະດັບໜ່ວຍບໍລິການຈຳປາສັກ ຂຶ້ນເປັນສາຂາ. ສືບຕໍ່ຕິດຕາມດັດແກ້ ແລະ ປັບປຸງລະບຽບພາຍໃນຂອງທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂາປາກເຊ ແລະ ທະນາຄານ ມາເລຍັນ ເບີຫັດ ສາຂາໜອງດ້ວງ. ສືບຕໍ່ລົງກວດກາການເພີ່ມທະວີຮັກສາຄວາມປອດໄພ ແລະ ປະເມີນຄືນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຈຳນວນ 27 ແຫ່ງ, ສືບຕໍ່ຕິດຕາມ ແລະ ຊຸກຍູ້ທະນາຄານທຸລະກິດ ຈຳນວນ 5 ແຫ່ງ ທີ່ຍັງບໍ່ສາມາດເພີ່ມເງິນທຶນຈົດທະບຽນຕ່ຳສຸດ ໄດ້ຄົບຖ້ວນຕາມລະບຽບກົດໝາຍໄດ້ກຳນົດອອກ;

ກະຊວງມອບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ລາວໃໝ່ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສຸກຮຸ່ງເຮືອງ, ກະຊວງປ່ຽນໃບອະນຸຍາດດຳເນີນທຸລະກິດ ຈາກກອງທຶນສະຫະກອນ ມາເປັນ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ພົນຈະເລີນຊັບ; ກະຊວງອອກຂໍ້ຕົກລົງຍຸບເລີກໃບອະນຸຍາດດຳເນີນທຸລະກິດຖາວອນຂອງ ໂຮງຊວດຈຳ ຄຳປະສິງ;

- **ວຽກງານສ້າງ ແລະ ປັບປຸງນິຕິກຳ:** ສືບຕໍ່ປັບປຸງຮ່າງດຳລັດວ່າດ້ວຍໂຮງຊວດຈຳ, ຄົ້ນຄວ້າຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ, ກະຊວງສະເໜີກະຊວງຍຸຕິທຳກວດກາຄວາມສອດຄ່ອງດ້ານກົດໝາຍ ກ່ຽວກັບຮ່າງດຳລັດວ່າດ້ວຍການປົກປ້ອງເງິນຝາກ;

ສືບຕໍ່ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍ ການບໍລິຫານຊັບສິນຂອງທະນາຄານທຸລະກິດ, ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການບໍລິການຜະລິດຕະພັນທາງການເງິນ;

ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ກວດສອບ ກ່ຽວກັບວຽກງານຫຼັກຊັບ;